**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 57 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 08/07/22

# ມະຕິ
## ກອງປະຊຸມສະພາແຫ່ງຊາດ
## ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ
## ກ່ຽວກັບການປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ

– ອີງຕາມລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 5;

– ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປີ 2015 ເລກທີ 10/ສພຊ, ລົງວັນທີ 14 ພະຈິກ 2016 ມາດຕາ 13 ຂໍ້ 1;

– ອີງຕາມກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021 ມາດຕາ 125 ວັກທີໜຶ່ງ;

– ອີງຕາມບົດລາຍງານຂອງລັດຖະບານ ກ່ຽວກັບຜົນການປະເມີນການປະຕິບັດກົດໝາຍ 4 ສະບັບ ລົງວັນທີ 23 ມິຖຸນາ 2022 ຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX.

ຜ່ານການພິຈາລະນາ ຢ່າງເລິກເຊິ່ງ ຕໍ່ເນື້ອໃນບົດລາຍງານຂອງລັດຖະບານ ກ່ຽວກັບຜົນການປະເມີນການປະຕິບັດກົດໝາຍ 4 ສະບັບ ໃນວາລະກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ລົງວັນທີ 23 ມິຖຸນາ 2022.

## ກອງປະຊຸມ ຕົກລົງ:

**ມາດຕາ 1 ຮັບຮອງເອົາ ບົດລາຍງານຂອງລັດຖະບານ ກ່ຽວກັບການປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ:**

ກອງປະຊຸມສະພາແຫ່ງຊາດ ຊົມເຊີຍລັດຖະບານ ທີ່ໄດ້ຍົກສູງຄວາມຮັບຜິດຊອບ ໃນການຈັດຕັ້ງປະຕິບັດຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 03/ຄປຈ, ລົງວັນທີ 1 ເມສາ 2022 ແລະ ເຫັນດີຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບຜົນການປະເມີນການປະຕິບັດກົດໝາຍ 4 ສະບັບ (ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍຊັບສິນຂອງລັດ ແລະ ກົດໝາຍວ່າດ້ວຍແຮ່ທາດ) ທີ່ໄດ້ນຳມາລາຍງານ ຕໍ່ກອງປະຊຸມສະພາແຫ່ງຊາດຄັ້ງນີ້ ພິຈາລະນາ.

ກອງປະຊຸມ ເຫັນວ່າ ນັບແຕ່ໄດ້ປະກາດໃຊ້ບັນດາກົດໝາຍເຫຼົ່ານັ້ນ ເປັນຕົ້ນມາ, ລັດຖະບານ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດ, ຄົ້ນຄວ້າ, ປັບປຸງ ໃຫ້ສອດຄ່ອງກັບສະພາບຕົວຈິງໃນແຕ່ລະໄລຍະ, ທັນເປັນນິຕິກຳໃຕ້ກົດໝາຍ, ໂຄສະນາ ເຜີຍແຜ່ ໃຫ້ສັງຄົມຮັບຮູ້, ເຂົ້າໃຈ ດ້ວຍຫຼາຍຮູບແບບ ຕິດພັນກັບການແກ້ໄຂບັນຫາ

ຕ່າງໆ ທີ່ເກີດຂຶ້ນຢູ່ໃນສັງຄົມ ຊຶ່ງສາມາດຍາດໄດ້ຜົນສໍາເລັດທີ່ສໍາຄັນຫຼາຍດ້ານ ເປັນຕົ້ນ ໄດ້ປົກປ້ອງສິດ ແລະ ຜົນປະໂຫຍດລວມຂອງລັດ, ບຸກຄົນ ແລະ ນິຕິບຸກຄົນ, ສ້າງສະພາບແວດລ້ອມເອື້ອອໍານວຍໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ, ປະກອບສ່ວນສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ໄດ້ດີຂຶ້ນ. ແຕ່ຄຽງຄູ່ກັນນັ້ນ, ການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ເຫັນວ່າ ຍັງບໍ່ທັນເຂັ້ມງວດ, ສັກສິດເທົ່າທີ່ຄວນ, ຍັງມີຈຸດອ່ອນຄົງຄ້າງ ຊຶ່ງໄດ້ສົ່ງຜົນກະທົບທີ່ເປັນການຈໍາກັດຕໍ່ຈັງຫວະການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມຂອງປະເທດຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ.

**ມາດຕາ 2 ຮັບຮອງເອົາທິດທາງ, ມາດຕະການແກ້ໄຂ**

ກອງປະຊຸມ ເຫັນດີຮັບຮອງເອົາບັນດາທິດທາງ ແລະ ມາດຕະການແກ້ໄຂ ທີ່ລັດຖະບານ ໄດ້ສະເໜີຕໍ່ກອງປະຊຸມຄັ້ງນີ້. ກອງປະຊຸມ ສະເໜີໃຫ້ລັດຖະບານ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ຈັດຕັ້ງປະຕິບັດທິດທາງ, ມາດຕະການລວມ ແລະ ສະເພາະເພີ່ມເຕີມ ດັ່ງນີ້:

**1. ທິດທາງ, ມາດຕະການລວມ:**

1) ຊີ້ນໍາ ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ເພີ່ມທະວີການໂຄສະນາເຜີຍແຜ່ ກົດໝາຍທັງ 4 ສະບັບ ໃຫ້ກວ້າງຂວາງ, ເລິກເຊິ່ງ, ທົ່ວເຖິງ ແລະ ແທດເໝາະກັບແຕ່ລະປະເພດເປົ້າໝາຍ ເພື່ອສ້າງຄວາມເຂົ້າໃຈໃຫ້ຖືກຕ້ອງ ເປັນເອກະພາບ ຕໍ່ເນື້ອໃນແຕ່ລະກົດໝາຍ, ຍົກສູງສະຕິເຄົາລົບ ແລະ ປະຕິບັດກົດໝາຍ ໃຫ້ສູງຂຶ້ນ, ຕິດພັນກັບການແກ້ໄຂບັນດາປາກົດການຫຍໍ້ທໍ້ ໃນສັງຄົມ ຢ່າງເຂັ້ມງວດ;

2) ຊີ້ນໍາບັນດາກະຊວງທີ່ກ່ຽວຂ້ອງ ໃຫ້ຮີບຮ້ອນຄົ້ນຄວ້າຜັນຂະຫຍາຍບັນດາມາດຕາຂອງກົດໝາຍ 4 ສະບັບ ທີ່ກໍານົດໃຫ້ອອກລະບຽບການຕ່າງຫາກ ໃຫ້ເປັນນິຕິກໍາໃຕ້ກົດໝາຍ ເພື່ອປະກາດໃຊ້ໂດຍໄວ; ຄົ້ນຄວ້າ ແລະ ປັບປຸງເນື້ອໃນຂອງບາງມາດຕາ ຂອງກົດໝາຍ ທີ່ເຫັນວ່າບໍ່ສອດຄ່ອງ ຫຼື ຊໍ້າຊ້ອນກັບບັນດາມາດຕາຂອງກົດໝາຍສະບັບອື່ນ ເພື່ອເຮັດໃຫ້ກົດໝາຍ ມີເນື້ອໃນຮັດກຸມ, ຈະແຈ້ງ, ສອດຄ່ອງ ແລະ ສາມາດປະຕິບັດໄດ້;

3) ຊີ້ນໍາບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ເພີ່ມທະວີສະຕິເຄົາລົບ ແລະ ປະຕິບັດກົດໝາຍດັ່ງກ່າວ, ແກ້ໄຂພະນັກງານ-ລັດຖະກອນ ຜູ້ທີ່ມີການປະພຶດລະເມີດກົດໝາຍ ຂອງຂະແໜງການ ແລະ ອົງການຂອງຕົນ ຢ່າງເຂັ້ມງວດ;

4) ຊີ້ນໍາບັນດາກະຊວງທີ່ກ່ຽວຂ້ອງ ຜັນຂະຫຍາຍມາດຕາ 124 ແລະ 125 ຂອງກົດໝາຍວ່າດ້ວຍການສ້າງນິຕິກໍາ ເປັນນິຕິກໍາໃຕ້ກົດໝາຍ, ຮີບຮ້ອນຄົ້ນຄວ້າ, ສ້າງແຜນການ, ໂຄງການ ກ່ຽວກັບການປະເມີນການຈັດຕັ້ງປະຕິບັດກົດໝາຍ ໃນຂົງເຂດຕ່າງໆ ເປັນແຕ່ລະປີ ແລະ ດໍາເນີນການປະເມີນຜົນການປະຕິບັດກົດໝາຍ ແລ້ວລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ ເພື່ອພິຈາລະນາ.

**2. ທິດທາງ, ມາດຕະການສະເພາະ**

**2.1. ກົດໝາຍວ່າດ້ວຍທີ່ດິນ**

1) ເອົາໃຈໃສ່ຊີ້ນໍາກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເພີ່ມທະວີການປະສານສົມທົບກັບກະຊວງ, ອົງການທີ່ກ່ຽວຂ້ອງ ໃນການປະຕິບັດກົດໝາຍວ່າດ້ວຍທີ່ດິນ ແລະ ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ເປັນຕົ້ນ ການຄົ້ນຄວ້າ, ວາງແຜນຍຸດທະສາດ ແລະ ແຜນການນໍາໃຊ້ທີ່ດິນຂອງຂະແໜງການ ແລະ ທ້ອງຖິ່ນ ຕາມມາດຕາ 15, 16 ແລະ 18 ຂອງກົດໝາຍວ່າດ້ວຍທີ່ດິນ; ສໍາຫຼວດເກັບກໍາຂໍ້ມູນ ແລະ ຂຶ້ນທະບຽນອອກໃບຕາດິນໃນຂອບເຂດທົ່ວປະເທດ ໃຫ້ສໍາເລັດຕາມແຜນການ ທີ່ສະພາແຫ່ງຊາດໄດ້

ຮັບຮອງ; ຄົ້ນຄວ້າ ແລະ ຜັນຂະຫຍາຍມາດຕາ 103, 104, 106 ແລະ 112 ເປັນນິຕິກຳໃຕ້ກົດໝາຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ ປີ 2019);

2) ຊີ້ນຳບັນດາກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທົບທວນ ແລະ ຕີລາຄາການປະຕິບັດບັນດາບັນຫາພື້ນຖານ ທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ ປີ 2019) ເຊັ່ນ: ມາດຕາ 3 ກຳມະສິດກ່ຽວກັບທີ່ດິນ, ມາດຕາ 5 ນະໂຍບາຍຂອງລັດກ່ຽວກັບວຽກງານທີ່ດິນ, ມາດຕາ 6 ຫຼັກການກ່ຽວກັບວຽກງານທີ່ດິນ, ມາດຕາ 7 ການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ໄດ້ຮັບສິດນຳໃຊ້ທີ່ດິນ, ມາດຕາ 8 ການບໍ່ອະນຸຍາດໃຫ້ຈັບຈອງ ແລະ ບຸກລຸກທີ່ດິນ, ມາດຕາ 130 ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ;

3) ກວດກາ ແລະ ແກ້ໄຂບັນດາໂຄງການເຊົ່າ, ສຳປະທານທີ່ດິນ ທີ່ບໍ່ປະຕິບັດຕາມກົດໝາຍ, ສັນຍາ ຫຼື ບໍ່ມີປະສິດທິພາບ, ການໂອນກຳມະສິດທີ່ດິນ ລວມທັງການຫັນທີ່ດິນລັດເປັນຮູບການອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ ຢ່າງເຂັ້ມງວດ.

**2.2. ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ**

1) ເອົາໃຈໃສ່ຊີ້ນຳກະຊວງແຜນການ ແລະ ການລົງທຶນ ເພີ່ມທະວີຄວາມຮັບຜິດຊອບ ແລະ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ; ຄົ້ນຄວ້າ ແລະ ປັບປຸງນະໂຍບາຍສົ່ງເສີມການລົງທຶນ ຕາມເຂດ, ຂະແໜງການ ແລະ ນະໂຍບາຍພາສີ-ອາກອນ ໃຫ້ສົມເຫດສົມຜົນ, ແທດຕົວຈິງ ສາມາດເສີມຂະຫຍາຍໄດ້ທ່າແຮງແຕ່ລະເຂດ, ແຕ່ລະຂະແໜງການໃຫ້ຄົບຖ້ວນ ເພື່ອຊຸກຍູ້ ແລະ ສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ ປະກອບສ່ວນພັດທະນາເສດຖະກິດ-ສັງຄົມ ໃຫ້ຂະຫຍາຍຕົວໄວຂຶ້ນ ຕາມທິດສີຂຽວ ແລະ ຍືນຍົງ;

2) ຕັດສິນໃຈບຸກທະລຸທາງດ້ານຈິນຕະນາການ ແລະ ການປະພຶດຕົວຈິງ ໃນການປັບປຸງກົນໄກບໍລິການການລົງທຶນປະຕູດຽວ ໃຫ້ເປັນຮູບປະທຳ ຕາມມາດຕາ 80, 81 ແລະ 82, ປະຕິບັດຢ່າງເຂັ້ມງວດບັນດານິຕິກຳໃຕ້ກົດໝາຍ ກ່ຽວກັບການບໍລິການການລົງທຶນປະຕູດຽວ, ເດັດດ່ຽວແກ້ໄຂສິ່ງທີ່ເປັນອຸປະສັກອຸດຕັນ (ຫຼາຍຂັ້ນຫຼາຍຂອດ) ແລະ ຄວາມບໍ່ໂປ່ງໃສ ໃນການພິຈາລະນາອະນຸມັດການລົງທຶນ ລວມທັງຄົ້ນຄວ້າ, ວິໄຈ ເພື່ອປັບປຸງ ຄະນະກຳມະການຄຸ້ມຄອງ ແລະ ສົ່ງເສີມການລົງທຶນ ໃຫ້ສອດຄ່ອງ ເພື່ອສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ໃຫ້ແກ່ການພິຈາລະນາການລົງທຶນ ໃຫ້ວ່ອງໄວ, ມີປະສິດທິພາບ, ປະສິດທິຜົນ; ຫັນການຄຸ້ມຄອງ ແລະ ສົ່ງເສີມການລົງທຶນ ໄປສູ່ລະບົບດີຈິຕອນ;

3) ເພີ່ມທະວີການຄຸ້ມຄອງບັນດາໂຄງການ ແລະ ກິດຈະການລົງທຶນ ທີ່ໄດ້ອະນຸມັດແລ້ວ ໃຫ້ເຂັ້ມງວດ ຕາມກົດໝາຍ ແລະ ສັນຍາ, ແກ້ໄຂຢ່າງຂາດຕົວບັນດາໂຄງການ, ກິດຈະການລົງທຶນ ທີ່ບໍ່ປະຕິບັດຕາມກົດໝາຍ, ສັນຍາ ຫຼື ບໍ່ມີປະສິດທິພາບ, ປະສິດທິຜົນ;

4) ກະຊວງແຜນການ ແລະ ການລົງທຶນ ໃຫ້ຮີບຮ້ອນຄົ້ນຄວ້າ ແລະ ປັບປຸງບາງມາດຕາ ທີ່ບໍ່ສອດຄ່ອງ ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ເຊັ່ນ: ມາດຕາ 52 ແລະ 54 ເປັນຕົ້ນ; ເພີ່ມທະວີການຄຸ້ມຄອງຕໍ່ເຂດເສດຖະກິດພິເສດ ໂດຍສະເພາະ ຄົ້ນຄວ້າ ແລະ ຍົກລະດັບ ດຳລັດຂອງລັດຖະບານ ວ່າດ້ວຍເຂດເສດຖະກິດພິເສດ ເປັນກົດໝາຍ ເພື່ອຄວາມເປັນເອກະພາບ ໃນການຄຸ້ມຄອງເຂດເສດຖະກິດພິເສດ ໃນຂອບເຂດທົ່ວປະເທດ.

**2.3. ກົດໝາຍວ່າດ້ວຍຊັບສິນຂອງລັດ**

1) ຊີ້ນຳ ກະຊວງການເງິນ, ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ຍົກສູງຄວາມຮັບຜິດຊອບ ໃນການປະຕິບັດກົດໝາຍວ່າດ້ວຍຊັບສິນຂອງລັດ ໃຫ້ເຂັ້ມງວດ ແລະ ສັກສິດ ໂດຍສະເພາະ

ການຂຶ້ນບັນຊີຊັບສິນຂອງລັດ ໃຫ້ລະອຽດ, ຈະແຈ້ງ, ຄົບຖ້ວນ ພ້ອມທັງສ້າງຖານຂໍ້ມູນຄຸ້ມຄອງທີ່ທັນສະໄໝ ໃນລະບົບຄຸ້ມຄອງຊັບສິນຂອງລັດ ເພື່ອຮັບປະກັນຄວາມຊັດເຈນ, ໂປ່ງໃສ, ສາມາດກວດສອບ ແລະ ກວດກາໄດ້;

2) ກຳນົດເປັນຫຼັກການ ກ່ຽວກັບສິດໃນການຕົກລົງ ປະເພດຊັບສິນຂອງລັດ ທີ່ມີລັກສະນະຍຸດທະສາດ ແລະ ພົວພັນເຖິງຄວາມໝັ້ນຄົງຂອງຊາດ ລະຫວ່າງ ລັດຖະບານ ແລະ ສະພາແຫ່ງຊາດ, ອົງການປົກຄອງ ແລະ ສະພາປະຊາຊົນຂັ້ນແຂວງ ໃນກົດໝາຍວ່າດ້ວຍຊັບສິນຂອງລັດ ສະບັບປັບປຸງໃໝ່ ມາດຕາ 5 ຫຼັກການກ່ຽວກັບວຽກງານຊັບສິນຂອງລັດ, ມາດຕາ 24 ການຫັນຊັບສິນເປັນທຶນ ແລະ ມາດຕາ 28 ການຂາຍຮຸ້ນ ຫຼື ຖອນຮຸ້ນ ໃຫ້ລະອຽດ, ຈະແຈ້ງ ນັບທັງການແບ່ງຂັ້ນຄຸ້ມຄອງ ແລະ ສິດໃນການຕົກລົງ ໂອນ, ຊື້ ຂາຍຮຸ້ນ ແລະ ຊັບສິນຂອງລັດ ທີ່ມີມູນຄ່າສູງ; ຄົ້ນຄວ້າ ແລະ ຜັນຂະຫຍາຍມາດຕາ 24 ກ່ຽວກັບ ການຫັນຊັບສິນເປັນທຶນ ໃຫ້ເປັນນິຕິກຳໃຕ້ກົດໝາຍ.

### 2.4. ກົດໝາຍວ່າດ້ວຍແຮ່ທາດ

1) ຊີ້ນຳ ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ຍົກສູງຄວາມຮັບຜິດຊອບ ໃນການປະຕິບັດກົດໝາຍວ່າດ້ວຍແຮ່ທາດ ໂດຍສະເພາະ ມາດຕາ 23 ເຂດຫວງຫ້າມ ເພື່ອຫຼີກເວັ້ນການຫັນປ່ຽນເນື້ອທີ່ດິນໃນເຂດຫວງຫ້າມ ໄປເປັນດິນປະເພດອື່ນ, ເພີ່ມທະວີການຄຸ້ມຄອງບັນດາໂຄງການ ແລະ ກິດຈະການລົງທຶນກ່ຽວກັບແຮ່ທາດ ທີ່ໄດ້ຮັບອະນຸມັດແລ້ວ ໃຫ້ເຂັ້ມງວດ ຕາມກົດໝາຍ ແລະ ສັນຍາ; ກວດກາ ແລະ ແກ້ໄຂ ຢ່າງທັນການ ບັນດາໂຄງການ ແລະ ກິດຈະການລົງທຶນກ່ຽວກັບແຮ່ທາດ ທີ່ບໍ່ມີປະສິດທິພາບ, ປະສິດທິຜົນ ຫຼື ບໍ່ປະຕິບັດຕາມກົດໝາຍ ແລະ ສັນຍາ;

2) ຊຸກຍູ້, ສົ່ງເສີມ ການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ, ຜະລິດຕະພັນແຮ່ທາດ ຢູ່ພາຍໃນປະເທດ ໃຫ້ຫຼາຍຂຶ້ນ, ຫຼຸດຜ່ອນການສົ່ງອອກແຮ່ດິບ ທີ່ເປັນການທຳລາຍຊັບພະຍາກອນອັນລ້ຳຄ່າຂອງຊາດ ແລະ ທັງເປັນການສູນເສຍລາຍຮັບງົບປະມານຂອງລັດ; ຄົ້ນຄວ້າ, ວິໄຈ ແລະ ຢຸດຕິການອະນຸມັດໂຄງການສຳຫຼວດ, ຂຸດຄົ້ນແຮ່ທາດ ແລະ ກິດຈະການລົງທຶນໃໝ່ ເປັນຕົ້ນ ແຮ່ຄຳ ແລະ ແຮ່ຫາຍາກ; ເພີ່ມທະວີການຄຸ້ມຄອງແຮ່ຫາຍາກ ທີ່ເປັນແຫຼ່ງວັດຖຸດິບອັນລ້ຳຄ່າຂອງຊາດ, ຈຳກັດການເຮັດທົດລອງການຂຸດຄົ້ນ ແລະ ປຸງແຕ່ງແຮ່ຫາຍາກ, ເດັດຂາດ ບໍ່ປ່ອຍປະໃຫ້ມີການສວຍໂອກາດ ທີ່ຈະເປັນການທຳລາຍຊັບສິນບັດຂອງຊາດ; ຮີບຮ້ອນຄົ້ນຄວ້າ ແລະ ສ້າງແຜນຍຸດທະສາດພັດທະນາແຮ່ທາດ ໃຫ້ສຳເລັດໂດຍໄວ, ໃນນີ້ ໃຫ້ກຳນົດຈະແຈ້ງ ແຮ່ປະເພດໃດໃຫ້ຂຸດຄົ້ນ, ປຸງແຕ່ງ ເພື່ອຕອບສະໜອງ ໃຫ້ແກ່ລາຍຮັບງົບປະມານແຫ່ງຊາດ, ແກ້ໄຂຄວາມຫຍຸ້ງຍາກ ດ້ານເສດຖະກິດ-ການເງິນ ໃນໄລຍະສັ້ນ ແລະ ໄລຍະກາງ, ແຮ່ໃດຄວນສະຫງວນໄວ້ ເພື່ອມີແຜນພັດທະນາ ໃນໄລຍະຍາວ;

3) ຊີ້ນຳຢ່າງໃກ້ຊິດ ໃນການເຈລະຈາຮ່າງສັນຍາ ຫຼື ປັບປຸງສັນຍາ, ນິຕິກຳໃຕ້ກົດໝາຍ ທີ່ກ່ຽວຂ້ອງກັບໂຄງການ, ກິດຈະການລົງທຶນ ກ່ຽວກັບການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ຊຶ່ງຄວນກຳນົດເນື້ອໃນ ກ່ຽວກັບສິດໃນການດັດປັບມູນຄ່າແຮ່ທາດ ໃຫ້ສອດຄ່ອງຕາມສະພາບການເໜັງຕີງ ຂອງລາຄາຕະຫຼາດໂລກ ໃນແຕ່ລະໄລຍະ ເພື່ອຮັບປະກັນຜົນປະໂຫຍດຂອງລັດ ແລະ ຜູ້ລົງທຶນ ຢ່າງສົມເຫດສົມຜົນ.

**ມາດຕາ 3 ການຈັດຕັ້ງປະຕິບັດ**

1. ມອບໃຫ້ລັດຖະບານ ຊີ້ນຳບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ເພີ່ມທະວີຄວາມຮັບຜິດຊອບຂອງຕົນໃນການປະຕິບັດມະຕິສະບັບນີ້ ໃຫ້ເຂັ້ມງວດ ແລະ ເປັນຮູບປະທຳ;

2. ມອບໃຫ້ຄະນະປະຈຳສະພາແຫ່ງຊາດ ຊີ້ນຳບັນດາກຳມາທິການ, ຄະນະເລຂາທິການ, ສະຖາບັນຄົ້ນຄວ້ານິຕິກຳ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພີ່ມທະວີການຕິດຕາມ ກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

ປອ ໄຊສົມພອນ ພົມວິຫານ